ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 15 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 26 SEP 2022

# ແຈ້ງການ

ເຖິງ: ບັນດາ ບໍລິສັດມະຫາຊົນ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ.

ເລື່ອງ: ການລະດົມທຶນໂດຍການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 348/ສຄຄຊ, ລົງວັນທີ 22 ກັນຍາ 2022.

ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ໃນນາມເປັນເສນາທິການໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ໃນການຄຸ້ມຄອງມະຫາພາກ ທາງດ້ານວຽກງານຫຼັກຊັບ ຢ່າງລວມສູນໃນຂອບເຂດທົ່ວປະເທດ ຂໍຖືເປັນກຽດແຈ້ງມາຍັງ ບັນດາບໍລິສັດມະຫາຊົນ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ ຊາບທົ່ວເຖິງກັນວ່າ: ກໍລະນີ ບໍລິສັດມະຫາຊົນໃດໜຶ່ງ ມີຈຸດປະສົງຕ້ອງການໄປລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 13 ເງື່ອນໄຂການອອກຈຳໜ່າຍຮຸ້ນ (ວັກສອງ).

ບໍລິສັດມະຫາຊົນ ທີ່ມີຈຸດປະສົງໄປອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ຕ້ອງມີເງື່ອນໄຂຄົບຖ້ວນ ແລະ ຍື່ນຄຳຮ້ອງ ແລະ ເອກະສານປະກອບຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ພິຈາລະນາ.

1. ເງື່ອນໄຂຂອງການໄປອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ມີດັ່ງນີ້:
   1) ໄດ້ຮັບອະນຸຍາດຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ;
   2) ເປັນບໍລິສັດມະຫາຊົນ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ;
   3) ມີແຜນ ການອອກຈຳໜ່າຍຮຸ້ນ ແລະ ການນຳໃຊ້ທຶນທີ່ລະດົມໄດ້ ຊຶ່ງຖືກຮັບຮອງຈາກ ກອງປະຊຸມຜູ້ຖືຮຸ້ນ;
   4) ເປັນຂະແໜງການທີ່ມີຄວາມຕ້ອງການແຫຼ່ງທຶນຈຳນວນຫຼາຍ ພ້ອມທັງ ເປັນບໍລິສັດທີ່ມີການຜະລິດສິນຄ້າສົ່ງອອກຕ່າງປະເທດ ແລະ ມີລາຍຮັບເປັນເງິນຕາຕ່າງປະເທດ;

5) ມີຜົນການດໍາເນີນງານທີ່ດີ ແລະ ມີແຫຼ່ງລາຍຮັບ ເພື່ອຮັບປະກັນການຈ່າຍເງິນປັນຜົນ;
6) ມີເງື່ອນໄຂອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ນອກຈາກເງື່ອນໄຂຕ່າງໆຕາມທີ່ໄດ້ກໍານົດໄວ້ໃນຂ້າງເທິງນີ້ແລ້ວ ບໍລິສັດມະຫາຊົນທີ່ມີຈຸດປະສົງໄປອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ຍັງຈະຕ້ອງໄດ້ປະຕິບັດຕາມເງື່ອນໄຂຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງປະເທດທີ່ຕົນຈະໄປອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນດັ່ງກ່າວ.

2. ເອກະສານປະກອບການຮ້ອງຂໍໄປອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ມີດັ່ງນີ້:
1) ຄໍາຮ້ອງຕາມແບບພິມຂອງ ຄະນະກໍາມະການຄຸ້ມຄອງຫຼັກຊັບ;
2) ສໍາເນົາ ໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດ. ໃນກໍລະນີກິດຈະການສໍາປະທານ ຍັງຕ້ອງມີການສໍາເນົາ ສັນຍາສໍາປະທານ, ສັນຍາຮ່ວມທຶນໃນກິດຈະການສໍາປະທານ;
3) ສໍາເນົາ ໃບຢັ້ງຢືນການມອບອາກອນ;
4) ສໍາເນົາ ກົດລະບຽບຂອງບໍລິສັດ;
5) ສໍາເນົາ ມະຕິກອງປະຊຸມຜູ້ຖືຮຸ້ນ ກ່ຽວກັບການຮັບຮອງແຜນການອອກຈໍາໜ່າຍຮຸ້ນ ແລະ ການນໍາໃຊ້ທຶນທີ່ລະດົມໄດ້;
6) ເອກະສານລາຍງານການເງິນ;
7) ໜັງສືຊວນຊື້;
8) ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນ ກັບ ບໍລິສັດຫຼັກຊັບ ທີ່ເຮັດໜ້າທີ່ເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ;
9) ເອກະສານອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

3. ບໍລິສັດມະຫາຊົນທີ່ມີຈຸດປະສົງໄປອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ຕ້ອງເສຍຄ່າບໍລິການ ໃຫ້ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງນີ້:
1) ຄ່າຍື່ນຄໍາຮ້ອງ ຈໍານວນ 15.000.000 ກີບ ແລະ ຕ້ອງຊໍາລະພາຍໃນວັນທີ່ໄດ້ຍື່ນສໍານວນຄໍາຮ້ອງຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2) ຄ່າອອກໃບຢັ້ງຢືນການຮັບຮູ້ການອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ຈໍານວນ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າຮຸ້ນທັງໝົດທີ່ອອກຈໍາໜ່າຍໃນແຕ່ລະຄັ້ງ ແຕ່ບໍ່ໃຫ້ຕໍ່າກວ່າ 30.000.000 ກີບ ແລະ ຕ້ອງຊໍາລະພາຍໃນເວລາ 30 ວັນ ນັບແຕ່ວັນສໍາເລັດການອອກຈໍາໜ່າຍຮຸ້ນຢູ່ຕ່າງປະເທດ ເປັນຕົ້ນໄປ;
3) ຄ່າຄຸ້ມຄອງປະຈໍາປີ ຈໍານວນ 10.000.000 ກີບ ແລະ ຕ້ອງຊໍາລະພາຍໃນໄຕມາດໜຶ່ງ ຂອງປີຖັດໄປ. ຍົກເວັ້ນ ຄ່າຄຸ້ມຄອງປະຈໍາປີສໍາລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ທີ່ໄປອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ.

4. ພາຍຫຼັງທີ່ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ບໍລິສັດມະຫາຊົນ ທີ່ໄດ້ຮັບອະນຸຍາດ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ພັນທະຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງນີ້:
1) ຕ້ອງນໍາເອົາເງິນທັງໝົດທີ່ລະດົມໄດ້ຈາກການອອກຈໍາໜ່າຍຮຸ້ນ ເຂົ້າມາ ສປປ ລາວ ຜ່ານບັນຊີສະເພາະ ທີ່ເປີດໄວ້ໃນທະນາຄານທຸລະກິດໃດໜຶ່ງ ຊຶ່ງການນໍາເອົາເງິນດັ່ງກ່າວເຂົ້າມາ ສປປ ລາວ ຕ້ອງປະຕິບັດຕາມກົດ

ໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງປີ 2022) ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ;

2) ຕ້ອງລາຍງານກ່ຽວກັບຜົນການພິຈາລະນາຂອງ ອົງການຄຸ້ມຄອງວຽກງານຫຼັກຊັບຂອງປະເທດທີ່ຕົນໄປລະດົມທຶນໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບການພິຈາລະນາ ເປັນຕົ້ນໄປ;

3) ກໍລະນີ ບໍລິສັດມະຫາຊົນ ມີຈຸດປະສົງຂໍລະດົມທຶນເພີ່ມ ດ້ວຍການອອກຈຳໜ່າຍຮຸ້ນອີກຄັ້ງໃໝ່ ຕ້ອງລາຍງານເພື່ອຂໍອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ອນທີ່ຈະປະສານກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງຕ່າງປະເທດທຸກຄັ້ງ;

4) ທຸກໆການປ່ຽນແປງທີ່ສຳຄັນກ່ຽວກັບ ບໍລິສັດມະຫາຊົນ ຫຼື ການເຄື່ອນໄຫວທຸລະກິດ ລວມທັງການປ່ຽນແປງໃບທະບຽນວິສາຫະກິດ, ການອະນຸຍາດລົງທຶນ, ການສຳປະທານ, ການຈັດຕັ້ງຂອງບໍລິສັດ ແລະ ການຖືກປະຕິບັດມາດຕະການຕ່າງໆ ຕ້ອງລາຍງານໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ມີການປ່ຽນແປງ ເປັນຕົ້ນໄປ;

5) ທຸກໆເອກະສານລາຍງານການເງິນ ແລະ ຂໍ້ມູນອື່ນໆທີ່ ບໍລິສັດມະຫາຊົນ ສະໜອງໃຫ້ແກ່ ອົງການຄຸ້ມຄອງວຽກງານຫຼັກຊັບຂອງຕ່າງປະເທດ ຕ້ອງສຳເນົາໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ 1 ຊຸດ;

6) ກໍລະນີເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລ້ວໄປອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ຕ້ອງປະຕິບັດລະບອບການເປີດເຜີຍຂໍ້ມູນ ແລະ ຂໍ້ມູນທີ່ເປີດເຜີຍນັ້ນຕ້ອງເປັນຂໍ້ມູນອັນດຽວກັນທີ່ເປີດເຜີຍ ຢູ່ພາຍໃນ ສປປ ລາວ ແລະ ຕ່າງປະເທດ;

7) ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການລາຍງານ ແລະ ສະໜອງຂໍ້ມູນຮອບດ້ານກ່ຽວກັບ ບໍລິສັດມະຫາຊົນ ແລະ ການເຄື່ອນໄຫວທຸລະກິດ ລວມທັງອຳນວຍຄວາມສະດວກໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ລູກຄ້າ, ຜູ້ສະໜອງ ຫຼື ເຈົ້າໜີ້, ຜູ້ກວດສອບບັນຊີ, ທີ່ປຶກສາກົດໝາຍ ແລະ ອື່ນໆ ເພື່ອເອົາຂໍ້ມູນ;

8) ປະຕິບັດຕາມ ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ ທີ່ວາງອອກໃນແຕ່ລະໄລຍະ.

5. ກໍລະນີ ບໍລິສັດມະຫາຊົນ ມີການໄປອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ ແມ່ນຈະບໍ່ໄດ້ຮັບການຢັ້ງຢືນແຫຼ່ງທຶນຈາກ ທະນາຄານແຫ່ງ ສປປ ລາວ ພ້ອມທັງ ຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ.

6. ສຳລັບ ບໍລິສັດທີ່ມາຈາກຕ່າງປະເທດ ຫາກຕ້ອງການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ ຕ້ອງໄດ້ປະຕິບັດຕາມ ກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຂອງ ອົງການຄຸ້ມຄອງວຽກງານຫຼັກຊັບຂອງ ສປປ ລາວ ແລະ ຕະຫຼາດຫຼັກຊັບລາວ ວາງອອກໃນແຕ່ລະໄລຍະ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາ ບໍລິສັດມະຫາຊົນ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈຂອງແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ແຈ້ງການສະບັບນີ້ ປ່ຽນແທນແຈ້ງການເລື່ອງການລະດົມທຶນໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ ສະບັບເລກທີ 001/ຄຄຊ, ລົງວັນທີ 14 ກຸມພາ 2014.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ປະທານ

ສອນໄຊ ສີພັນດອນ